ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສຳນັກງານນາຍົກລັດຖະມົນຕີ** ເລກທີ 389/ນຍ

ນະຄອນຫລວງວຽງຈັນ, ວັນທີ 09.09.2010

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ຂອບນະໂຍບາຍ ແລະ ແຜນປະຕິບັດການພັດທະນາ ແລະ ຄຸ້ມຄອງຄູ ແຕ່ປີ 2010-2015

- ອີງຕາມ ກົດໝາຍວ່າລັດຖະບານ ແຫ່ງ ສປປ ລາວ, ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003.

- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ສະບັບປັບປຸງ ເລກທີ 04/ສພຊ, ລົງວັນທີ 03 ກໍລະກົດ 2007.

- ອີງຕາມ ໜັງສືສະເໜີ ສະບັບເລກທີ 761/ສສ.ຈຕ, ລົງວັນທີ 19 ສິງຫາ 2010 ຂອງກະຊວງສຶກສາທິການ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ:**

ມາດຕາ 1: ຮັບຮອງ ແລະ ປະກາດໃຊ້ ຂອບນະໂຍບາຍ ແລະ ແຜນປະຕິບັດການພັດທະນາ ແລະ ຄຸ້ມຄອງຄູ ແຕ່ປີ 2010-2015.

ມາດຕາ 2: ມອບໃຫ້ກະຊວງສຶກສາທິການ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຜັນຂະຫຍາຍ ແລະ ແລະ ຈັດຕັ້ງປະຕິບັດຂອບນະໂຍບາຍດັ່ງກ່າວ ໃຫ້ປະກົດຜົນເປັນຈິງ.

ມາດຕາ 3: ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫລວງ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ຈົ່ງຮັບຮູ້ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

ມາດຕາ 4: ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ບົວສອນ ບຸບຜາວັນ